# ໃບແຈ້ງຂໍ້ມູນ

## ສິ່ງທີ່ທ່ານຄວນຮູ້

### ໄວລັດໄນລ໌ຕະເວນຕົກແມ່ນຫຍັງ?

ໄວລັດໄນລ໌ຕະເວນຕົກ [WNV] ແມ່ນພຍາອທີ່ອາດຮ້າຍແຮງໄດ້. ຜູ້ຊ່ຽວຊານເຊື່ອວ່າ WNV ກາຍເປັນໂຣຄລະບາດທີ່ເກີດຂື້ນຕາມລະດູການໃນທະວີບອາເມລິກາເໜືອ ໂດຍຈະລຸກລາມຕອນໜ້າຮ້ອນຈົນເຖິງລະດູໃບໄມ້ຫລົ່ນ. ໃບແຈ້ງຂໍ້ມູນສະບັບນີ້ປະກອບດ້ວຍລາຍລະອຽດສຳຄັນທີ່ຈະພາໃຫ້ທ່ານສາມາດສັງເກດເຫັນໄວລັດໄນລ໌ຕະເວັນຕົກແລະປ້ອງກັນບໍ່ໃຫ້ເກີດຂື້ນໄດ້.

### ຂ້ອຍຈະສາມາດເຮັດຫຍັງໄດ້ແດ່ ເພື່ອປ້ອງກັນບໍ່ໃຫ້ WNV ເກີດຂື້ນ?

ວິທີຫລີກລ່ຽງ WNV ທີ່ທັງງ່າຍແລະໃຫ້ຜົນດີທີ່ສຸດ ແມ່ນປ້ອງກັນບໍ່ໃຫ້ຍຸງກັດ.

- ເມື່ອທ່ານຢູ່ນອກອາຄານ ໃຫ້ໃຊ້ຢາໄລ່ແມງຊະນິດມີ DEET (N, N-diethyl-meta-toluamide). ໃຫ້ປະຕິບັດຕາມຄຳສັ່ງແນະນຳປາກົດເທິງທໍ່ບັນຈຸ.
- ຍຸງສ່ວນຫລາຍຈະມີການເຄື່ອນໄຫວຫລາຍທີ່ສຸດໃນຍາມຕົກຄໍ່າແລະຍາມຮຸ່ງ. ຢ່າລືມໃຊ້ຢາໄລ່ແມງ ແລະໃສ່ເສື້ອແຂນຍາວພ້ອມໂສ້ງຂາຍາວໃນເວລານັ້ນ ຫລືເສືອກຢູ່ໃນອາຄານໃນເວລານັ້ນ. ການນຸ່ງເສື້ອຜ້າສີອ່ອນອາດຊ່ວຍໃຫ້ທ່ານສາມາດມອງເຫັນຕົວຍຸງທີ່ລົງມາເຄາະຕົວທ່ານ.
- ຈົ່ງທຳຄວາມແນ່ໃຈວ່າ ມຸ້ງລວດທີ່ຕິດຕັ້ງເທິງປະຕູແລະປ່ອງຢ້ຽມຂອງທ່ານຢູ່ໃນສະພາບທີ່ດີ ເພື່ອປ້ອງກັນບໍ່ໃຫ້ຍຸງສາມາດເຂົ້າໄປໃນເຮືອນຂອງທ່ານໄດ້.
- ກຳຈັດບ່ອນທີ່ພວກຍຸງສາມາດຂະຫຍາຍພັນໄດ້ ໂດຍລະບາຍນ້ຳທີ່ຄ້າງໃນໂຖດອກໄມ້ ຄຸ ແລະຖັງໄມ້. ປ່ຽນນ້ຳໃນຈານຂອງສັດລ້ຽງ ແລະໃນແອ່ງອາບນ້ຳຂອງນົກ ອາທິດລະເທື່ອ. ເຈາະຮູໃນຢາງລົດເກົ່າທີ່ໃຊ້ເປັນໂອ້ນຊາເພື່ອໃຫ້ນ້ຳລະບາຍອອກ. ຖອດນ້ຳອອກຈາກຖັງໝລົ້ນນ້ຳຂອງພວກເດັກນ້ອຍແລ້ວຊັນມ້ຽນໄວ້ ເມື່ອບໍ່ໄດ້ໃຊ້.

### ອາການທີ່ສະແດງເຖິງໂຣຄ WNV ມີຫຍັງແດ່?

ໂຣຄ WNV ສົ່ງຜົນຕໍ່ລະບົບປະສາດກາງ. ມີອາການທີ່ແຕກຕ່າງກັນ.

- **ອາການທີ່ຮ້າຍແຮງໃນຄົນຈຳນວນນ້ອຍ.** ຜູ້ຕິດເຊື້ອ WNV ປະມານ 1 ຄົນໃນ 150 ຈະປ່ວຍໜັກທີ່ສຸດ.ອາການອັນຮ້າຍແຮງອາດຮວມເຖິງ ໄຂ້ສູງ ເຈັບຫົວ ຄໍແຂງ ມຶນ ງົງ ໝົດສະຕິ ສັ່ນໄຫວ ຊັກ ກ່ອນຊີ້ນອ່ອນແອ່ ສາຍຕາສູນຫາຍ ບໍ່ມີຄວາມຮູ້ສຶກ ແລະອຳມະພາດ. ອາການໝູ່ນີ້ອາດເປັນເວລານານຫລາຍສັບປະດາ ແລະອາດສົ່ງຜົນຕໍ່ລະບົບປະສາດຢ່າງຖາວອນໄດ້.
- **ອາການທີ່ອ່ອນກວ່າໃນບາງຄົນ.** ຄົນຈຳນວນຫລາຍເຖິງ 20 ໃນຮ້ອຍໃນກຸ່ມທີ່ຕິດເຊື້ອຈະສະແດງອອກອາການຕ່າງໆ ເຊິ່ງອາດຮວມເຖິງໄຂ້ ເຈັບຫົວແລະປວດຕາມຮ່າງກາຍ ຄື່ນໄສ້ ຮາກ ແລະລາງເທື່ອ ຕ່ອມນ້ຳຢາງເຫລືອງໄຄ່ຫລືຕຸ່ມຄັ່ນຕາມຜິວໜັງເທິງໜ້າອົກ ທ້ອງ ແລະຫລັງ. ອາການໝູ່ນີ້ອາດຈະປາກົດອອກມາເປັນລະຍະນານພຽງບໍ່ຈັກ



DEPARTMENT OF HEALTH AND HUMAN SERVICES
CENTERS FOR DISEASE CONTROL AND PREVENTION
SAFER • HEALTHIER • PEOPLE™

ມີເທົ່ານັ້ນກໍໄດ້ ເຖິງແມ່ນວ່າ ແມ້ແຕ່ຄົນທີ່ມີສຸຂະພາບດີລາງຄົນເຄີຍເປັນໄຂ້ໄດ້ປ່ອຍເປັນເວລານານຫລາຍສັບປະດາກໍຕາມ.

- **ບໍ່ມີອາການປາກົດອອກມາໃນຄົນສ່ວນຫລາຍ.** ຜູ້ຕິດເຊື້ອ WNV ປະມານ 80 ໃນຮ້ອຍ (ປະມານ 4 ລາຍໃນ 5) ຈະບໍ່ສະແດງອາການໃດໆເລີຍ.

## ໄວລັດໄນລ໌ຕະເວັນຕົກມີການແຜ່ຫລາຍຢ່າງໃດແດ່?

- **ຕົວຍຸງທີ່ຕິດເຊື້ອ.** ໃນກໍລະນີສ່ວນຫລາຍ ເຊື້ອ WNV ຈະແຜ່ຫລາຍຍ້ອນຖືກກັດໂດຍຍຸງທີ່ຕິດເຊື້ອແລ້ວ. ຕົວຍຸງຈະເປັນຕົວນຳເຊື້ອ WNV ຍ້ອນວ່າໂຕເອງໄດ້ຕິດເຊື້ອເມື່ອໄດ້ໃຊ້ຕົວນົກຕິດເຊື້ອມາເປັນອາຫານ. ຕໍ່ຈາກນັ້ນ ຍຸງທີ່ຕິດ ເຊື້ອແລ້ວກໍສາມາດສົ່ງຕໍ່ເຊື້ອ WNV ໃຫ້ແກ່ມະນຸດແລະສັດອື່ນໆ ໄດ້ດ້ວຍການກັດ.
- **ການໃຫ້ເລືອດ ການປ່ຽນອະວັຍຍະວະ ແລະການແລກປ່ຽນລະຫວ່າງແມ່ກັບລູກ.** ໃນກໍລະນີຈຳນວນນ້ອຍຫລາຍກໍໄດ້ມີການແຜ່ເຊື້ອ WNV ຜ່ານການໃຫ້ເລືອດ ການປ່ຽນອະວັຍຍະວະ ການໃຫ້ນົມລູກ ແລະການແລກປ່ຽນລະຫວ່າງແມ່ກັບລູກໃນລະຫວ່າງການຖືພາ.
- **ບໍ່ມີການແຜ່ຫລາຍເກີດຂື້ນເນື່ອງຈາກການສັມຜັດກັນ.** ບໍ່ມີການແຜ່ເຊື້ອ WNV ເກີດຂື້ນຍ້ອນການສັມຜັດໂດຍບັງເອີນເຊັ່ນການຈັບຕ້ອງຫລືຈູບຜູ້ທີ່ຕິດເຊື້ອແລ້ວ.

## ຜູ້ທີ່ຕິດເຊື້ອແລ້ວຈະເລີ່ມເປັນໂຣຄໂດຍໄວປານໃດ?

ຕາມປົກກະຕິ ຜູ້ຄົນຈະເລີ່ມສະແດງອອກອາການຂອງໂຣຄລະຫວ່າງ 3 ກັບ 14 ວັນຫລັງຈາກໄດ້ຖືກກັດໂດຍຍຸງທີ່ຕິດເຊື້ອແລ້ວ.

## ການຮັກສາການຕິດເຊື້ອ WNV ຈະໃຊ້ວິທີໃດແດ່?

ບໍ່ມີວິທີການຮັກສາທີ່ເຈາະຈົງແນ່ນອນໄວ້ສຳຫລັບການຕິດເຊື້ອ WNV. ໃນກໍລະນີຕ່າງໆ ທີ່ອາການບໍ່ຮ້າຍແຮງປານໃດ ຜູ້ຄົນຈະມີອາການຕ່າງໆ ເຊັ່ນ ໄຂ້ແລະການເຈັບປວດທີ່ຫາຍເອງໃນທີ່ສຸດ. ໃນກໍລະນີຕ່າງໆທີ່ຮ້າຍແຮງກວ່ານັ້ນ ຕາມປົກກະຕິຄົນໄຂ້ຈະຕ້ອງໄປໂຮງໝໍ ເພື່ອໄດ້ຮັບການປິ່ນປົວຮັກສາປະເພດສນັບສນຸນ ຮວມທັງການສີດຢາເຂົ້າເສັ້ນເລືອດ ການຊ່ວຍຫາຍໃຈ ແລະການຮັກສາພະຍາບານ.

## ຂ້ອຍຄວນເຮັດຫຍັງແດ່ ໃນກໍລະນີທີ່ຂ້ອຍຄິດວ່າຂ້ອຍກຳລັງຕິດເຊື້ອ WNV?

ການເປັນໂຣຄ WNV ຢ່າງບໍ່ຮ້າຍແຮງມັກຈະຫາຍເອງ ແລະຕາມປົກກະຕິ ຄົນໄຂ້ຈະບໍ່ຈຳເປັນຕ້ອງໄປຫາໝໍກໍໄດ້ຍ້ອນການຕິດເຊື້ອເຊັ່ນນີ້ ເຖິງແມ່ນວ່າເຂົາເຈົ້າອາດຈະຕັດສິນໃຈເຮັດເຊັ່ນນີ້ກໍໄດ້. ຖ້າທ່ານເລີ່ມມີອາການຂອງ WNV ທີ່ຮ້າຍແຮງ ເຊັ່ນອາການເຈັບຫົວຢ່າງຮ້າຍແຮງ ຫລືການສັບສົນຜິດທັມມະດາ ຈົ່ງໄປຫາທ່ານໝໍໂດຍທັນທີໂລດ. ຕາມປົກກະຕິ ການເປັນໂຣຄ WNV ຢ່າງຮ້າຍແຮງ ຈະເປັນເຫດໃຫ້ຈຳຕ້ອງໄປນອນໂຮງໝໍ. ຂໍແນະນຳໃຫ້ຍິງຖືພາແລະຍິງລ້ຽງນົມລູກເຂົ້າປຶກສາທ່ານໝໍໃນກໍລະນີທີ່ມີອາການທີ່ອາດຈະເປັນໂຣຄ WNV ໄດ້.



DEPARTMENT OF HEALTH AND HUMAN SERVICES
CENTERS FOR DISEASE CONTROL AND PREVENTION
SAFER • HEALTHIER • PEOPLE™

## ສິ່ງທີ່ທ່ານຄວນຮູ້
(ຕໍ່ຈາກໜ້າກ່ອນ)

### ມີການສ່ຽງຕໍ່ໂຣຄ WNV ຫລາຍ ນ້ອຍປານໃດ?

**ຜູ້ທີ່ມີອາຍຸ 50 ປີ ມີການສ່ຽງຕໍ່ໂຣຄທີ່ສູງກວ່າ.** ຜູ້ທີ່ມີອາຍຸສູງກວ່າ 50 ປີມີໂອກາດທີ່ສູງກວ່າໃນການມີອາການຮ້າຍແຮງຂອງການຕິດເຊື້ອ WNV ໃນກໍລະນີທີ່ຈະເປັນໂຣຄໄດ້ປ່ວຍຈິງໆ ແລະຄວນລະມັດລະວັງເປັນພິເສດເພື່ອຫລີກລ່ຽງບໍ່ໃຫ້ຍຸງກັດ.
**ການຢູ່ນອກອາຄານ ໝາຍຄວາມວ່າທ່ານກຳລັງສ່ຽງພັຍຢູ່.** ຍິ່ງທ່ານໄດ້ຢູ່ນອກອາຄານເປັນເວລານານປານໃດ ຍິ່ງມີຄວາມເປັນໄປໄດ້ສູງທີ່ທ່ານອາດຖືກກັດໂດຍຍຸງທີ່ຕິດເຊື້ອ. ຈົ່ງຕັ້ງໃຈຫລີກລ່ຽງບໍ່ໃຫ້ຍຸງເຂົ້າມາກັດໃນກໍລະນີທີ່ທ່ານຢູ່ນອກອາຄານເປັນເວລານານ ບໍ່ວ່າຈະເຮັດວຽກຫລືຫລິ້ນມ່ວນຊື່ນກໍຕາມ.
**ການສ່ຽງພັຍເນື່ອງຈາກກະບວນການທາງແພດຕ່າງໆ ຢູ່ໃນອັດຕາທີ່ຕໍ່າຫລາຍ.** ຈະມີການກວດເລືອດທີ່ບໍລິຈາກເພື່ອຊາບວ່າມີເຊື້ອ WNV ຫລືບໍ່ກ່ອນນຳໄປໃຊ້. ການສ່ຽງຕໍ່ການຕິດເຊື້ອ WNV ເນື່ອງຈາກການໃຫ້ເລືອດແລະການປ່ຽນອະວັຍຍະວະກໍນ້ອຍ ຫລາຍຈຶ່ງບໍ່ຄວນເປັນຂໍ້ບົ່ງຫ້າມບໍ່ໃຫ້ຜູ້ຄົນໄດ້ຮັບການຜ່າຕັດເມື່ອມີຄວາມຈຳເປັນຕ້ອງໄດ້ຮັບ. ຫາກທ່ານມີຂໍ້ຂ້ອງໃຈໃດໆ ໃຫ້ປຶກສາທ່ານໝໍ.
**ການຖືພາແລະໃຫ້ນົມລູກບໍ່ເປັນຜົນໃຫ້ພາວະການສ່ຽງຕໍ່ການຕິດເຊື້ອ WNV ສູງຂື້ນ.** ພາວະການສ່ຽງທີ່ WNV ອາດກໍໃຫ້ເກີດກັບລູກໃນທ້ອງແມ່ຫລືເດັກອ່ອນດ້ວຍການຕິດເຊື້ອໂດຍຜ່ານນົມຈາກເຕົ້າຍັງຢູ່ໃນລະຫວ່າງການປະເມີນ. ໃຫ້ປຶກສາຜູ້ທີ່ໃຫ້ການຮັກສາພະຍາບານແກ່ທ່ານໃນກໍລະນີທີ່ທ່ານມີຂໍ້ຂ້ອງໃຈໃດໆ.

### ໂຄງການ CDC ກຳລັງດຳເນີນການໃດໆ ກ່ຽວກັບເລື່ອງ WNV ແດ່?

ໂຄງການ CDC ກຳລັງຮ່ວມມືເຮັດການນຳກົມສາທາລະນລສຸກທັງໃນລະດັບມົນລັຖແລະທ້ອງຖິ່ນ ຫ້ອງການອາຫານແລະຢາ Food and Drug Administration] ແລະໜ່ວຍງານອື່ນໆ ຂອງລັຖບານ ຮ່ວມທັງອົງການອຸດສາຫະກັມເອກະຊົນ ເພື່ອກຽມຕົວຮັບມືແລະປ້ອງກັນການເປັນໂຣຄ WNV ລາຍໃໝ່.
*ສິ່ງຕ່າງໆທີ່ອົງການ CDC ກຳລັງເຮັດຢູ່ຮ່ວມເຖິງ:*

- ການປະສານງານຖານຂໍ້ມູນອີເລັກທໍນິກທົ່ວປະເທດໃຫ້ມົນຣັຖທັງຫລາຍແບ່ງຂໍ້ມູນກ່ຽວກັບWNV ລະຫວ່າງກັນ.
- ຊ່ວຍມົນຣັຖທັງຫລາຍໃນການພັທນາໂຄງການປ້ອງກັນແລະຄວບຄຸມຍຸງທີ່ປັບປຸງປະສິດທິພາບໃຫ້ສູງຂື້ນແລະດຳເນີນການຕາມໂຄງການດັ່ງກ່າວ.
- ການພັທນາວິທີກວດສອບແລະວິນິສັຍໂຣຄ WNV ທີ່ທັງດີຂື້ນແລະໃຫ້ຜົນໄວຂື້ນ.
- ສ້າງເຄື່ອງມືແລະໂຄງການໃໝ່ເພື່ອໃຫ້ການສຶກສາໄວ້ສຳຫລັບສື່ມວນຊົນ ສາທາລະນະຊົນ ແລະຜູ້ປະກອບອາຊີບທາງການແພດ.
- ເປີດຫ້ອງປະຕິບັດການບ່ອນໃໝ່ ເພື່ອກວດສອບໂຣຄ WNV .

### ຂ້ອຍຄວນຮູ້ສິ່ງໃດອີກແດ່?

**ຫາກທ່ານພົບຊາກນົກຕາຍ:** ຫ້າມຈັບຕ້ອງຊາກນັ້ນດ້ວຍມືເປົ່າ. ຕິດຕໍ່ກັບສາທາລະນະສຸກໃນທ້ອງຖິ່ນຂອງທ່ານເພື່ອຂໍຊາບວິທີແຈ້ງການຕາຍແລະຂະຈັດຖິ້ມຊາກຕາຍ.

ຖ້າຕ້ອງການຊາບລາຍລະອຽດເພີ່ມເຕີມ ໃຫ້ໄປທີ່ເວບໄຊຕ໌ www.cdc.gov ຫລືໂທຫາສາຍດ່ວນ CDC
ທີ່ (888) 246-2675 (ພາສາອັງກິດ), (888) 246-2857 (ພາສາສະເປນ), ຫລື(866) 874-2646 (TTY)